ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ກະຊວງການເງິນ ເລກທີ 1159 /ກງ

ນະຄອນຫຼວງວຽງຈັນ,ວັນທີ 18 ເມສາ 2019

# ຄຳແນະນຳ

## ວ່າດ້ວຍການຄຸ້ມຄອງຜູ້ປະກອບການມາດຕະຖານເອອີໂອ (Authorized Economic Operators)

- ອີງຕາມກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມບົດລາຍງານຂອງກົມພາສີສະບັບເລກທີ 01513/ກພສ, ລົງວັນທີ 26 ກຸມພາ 2019

## ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ ດັ່ງນີ້:

### 1.ຈຸດປະສົງ

ບົດແນະນຳສະບັບນີ້ກຳນົດຫຼັກການ, ລະບຽບການ, ເງື່ອນໄຂ, ມາດຕະການ, ກົນໄກ ແລະ ວິທີການຄຸ້ມຄອງຜູ້ປະກອບການມາດຕະຖານເອອີໂອ ເພື່ອຮັບປະກັນສິດ, ຄວາມຍຸຕິທຳ ແລະ ຄວາມໂປ່ງໃສໃນການອຳນວຍຄວາມສະດວກດ້ານການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ໃຫ້ແກ່ຜູ້ປະກອບການມາດຕະຖານເອອີໂອ; ຮັບປະກັນຄວາມປອດໄພທາງດ້ານການຄ້າ ແລະ ແນໃສ່ຍົກສູງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການຢ່າງຖືກຕ້ອງ ແລະ ເຂັ້ມງວດ.

### 2.ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງປະຕິບັດແຜນງານຜູ້ປະກອບການມາດຕະຖານເອອີໂອ ຊຶ່ງອະນຸຍາດໃຫ້ຜູ້ປະກອບການທີ່ເຄື່ອນໄຫວທຸລະກິດຕິດພັນກັບການນຳເຂົ້າ, ສົ່ງອອກສິນຄ້າ, ເຄື່ອງຂອງ ເຊັ່ນ: ຜູ້ນຳເຂົ້າສິນຄ້າ, ຜູ້ສົ່ງອອກສິນຄ້າ, ຜູ້ປະກອບການຜະລິດສິນຄ້າ, ຜູ້ບໍລິການຂົນສົ່ງສິນຄ້າ, ຜູ້ບໍລິການຈັດສົ່ງສິນຄ້າ, ຜູ້ບໍລິການສາງພັກສິນຄ້າ, ຜູ້ບໍລິການແຈ້ງພາສີ ແລະ ອື່ນໆ ສາມາດສະໝັກເຂົ້າຮ່ວມແຜນງານດັ່ງກ່າວໄດ້.

### 3.ການອະທິບາຍຄຳສັບ

- **ຜູ້ປະກອບການ ຫຼື Economic Operator:** ໝາຍເຖິງບໍລິສັດ ຫຼື ອົງການຈັດຕັ້ງທີ່ເຄື່ອນໄຫວທຸລະກິດທີ່ກ່ຽວຂ້ອງກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ແລະ ການຂົນສົ່ງສິນຄ້າຜ່ານແດນສາກົນ ເຊັ່ນ: ຜູ້ນຳເຂົ້າສິນຄ້າ, ຜູ້ສົ່ງອອກສິນຄ້າ, ຜູ້ບໍລິການຂົນສົ່ງສິນຄ້າ, ຜູ້ບໍລິການຈັດສົ່ງສິນຄ້າ, ຜູ້ບໍລິການສາງສິນຄ້າ, ຜູ້ບໍລິການທ່າເຮືອ, ຜູ້ບໍລິການສະໜາມບິນ, ຜູ້ບໍລິການແຈ້ງພາສີ, ຜູ້ຜະລິດສິນຄ້າ ແລະ ຕົວແທນຈຳໜ່າຍສິນຄ້າເປັນຕົ້ນ.
- **ຜູ້ປະກອບການມາດຕະຖານເອອີໂອ ຫຼື** Authorized Economic Operator (AEO):ໝາຍເຖິງຜູ້ປະກອບການທີ່ໄດ້ຮັບຮອງຢ່າງເປັນທາງການຈາກລັດຖະການພາສີ ໃຫ້ໄດ້ຮັບສິດທິພິເສດກ່ຽວກັບການປະຕິບັດຂັ້ນຕອນການແຈ້ງພາສີ ແລະ ການກວດປ່ອຍສິນຄ້າຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳສະບັບນີ້.

- **ແຜນງານຜູ້ປະກອບການມາດຕະຖານເອອີໂອ** ຫຼື Authorized Economic Operator Program: ໝາຍເຖິງແຜນງານທີ່ລັດຖະການພາສີສ້າງຂຶ້ນເພື່ອຊຸກຍູ້ສົ່ງເສີມຜູ້ປະກອບການທີ່ມີເງື່ອນໄຂເຂົ້າຮ່ວມປະຕິບັດແຜນງານດັ່ງກ່າວໂດຍປະຕິບັດຫຼັກການ, ລະບຽບການ, ກົນໄກ, ຂັ້ນຕອນ, ເງື່ອນໄຂ, ມາດຖານ, ມາດຕະການ ແລະ ວິທີການ ທີ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້ຢ່າງເປັນກະພາບ.
- **ສັນຍາເອອີໂອ:** ໝາຍເຖິງຂໍ້ຜູກພັນ ລະຫວ່າງລັດຖະການພາສີ ແລະ ຜູ້ປະກອບການມາດຕະຖານເອອີໂອ ເພື່ອກຳນົດສິດ, ພັນທະ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຝ່າຍໃນການຈັດຕັ້ງປະຕິບັດແຜນງານຜູ້ປະກອບການເອອີໂອ.
- **ໃບຢັ້ງຢືນເອອີໂອ:** ໝາຍເຖິງເອກະສານຮັບຮອງສະຖານະພາບຂອງຜູ້ປະກອບການມາດຕະຖານເອອີໂອຊຶ່ງອອກໂດຍຫົວໜ້າກົມພາສີ.

4. **ຫຼັກການ**

ການດຳເນີນແຜນງານຜູ້ປະກອບການມາດຕະຖານເອອີໂອ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

- ຕ້ອງຮັບປະກັນການຈັດຕັ້ງປະຕິບັດສອດຄ່ອງກັບກົດໝາຍ ແລະ ລະບຽບການກ່ຽວຂ້ອງ; ເພີ່ມທະວີການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການທີ່ເຄື່ອນໄຫວຢ່າງຖືກຕ້ອງ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງເດັດຂາດ;
- ຕ້ອງປະຕິບັດສອດຄ່ອງກັບຫຼັກການ ແລະ ວິທີການ ຂອງສາກົນ ໂດຍສະເພາະແມ່ນ: ມາດຕະຖານທາງດ້ານຄວາມປອດໄພ ແລະ ການອຳນວຍຄວາມສະດວກຂອງການຄ້າສາກົນຂອງອົງການພາສີໂລກ (WCO Framework of Standards), ສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າຂອງອົງການການຄ້າໂລກ (WTO Trade Facilitation Agreement) ແລະ ສັນຍາສາກົນອື່ນໆ ທີ່ ສປປ ລາວ ເຂົ້າເປັນພາຄີ;
- ຕ້ອງປະຕິບັດຫຼັກການເຂົ້າຮ່ວມແຜນງານຜູ້ປະກອບການມາດຕະຖານເອອີໂອ ດ້ວຍຄວາມສະໝັກໃຈໂດຍຜູ້ປະກອບການທີ່ມີເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນຕາມມາດຖານທີ່ກຳນົດໃນລະບຽບການນີ້ສາມາດສະເໜີເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມໂຄງການດັ່ງກ່າວ;
- ຕ້ອງສ້າງເງື່ອນໄຂສະດວກເພື່ອສົ່ງເສີມບັນດາຜູ້ປະກອບການທີ່ມີເງື່ອນໄຂໃຫ້ເຂົ້າຮ່ວມແຜນງານດັ່ງກ່າວແນໃສ່ຍົກສູງການຮ່ວມມືລະຫວ່າງລັດຖະການພາສີ ແລະ ພາກຜູ້ປະກອບການໃນການເພີ່ມທະວີການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

5. **ເງື່ອນໄຂ ແລະ ມາດຖານຂອງຜູ້ປະກອບການມາດຕະຖານເອອີໂອ**

ຜູ້ປະກອບການທີ່ຈະເຂົ້າຮ່ວມແຜນງານຜູ້ປະກອບການມາດຕະຖານເອອີໂອຕ້ອງມີເງື່ອນໄຂ ແລະ ມາດຖານດັ່ງນີ້:

1) ຕ້ອງແມ່ນຫົວໜ່ວຍທຸລະກິດທີ່ຂຶ້ນທະບຽນວິສາຫະກິດ ແລະ ຂຶ້ນທະບຽນຜູ້ເສຍອາກອນຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2) ຕ້ອງຜ່ານການເຄື່ອນໄຫວດຳເນີນທຸລະກິດທີ່ຕິດພັນກັບການນຳເຂົ້າແລະສົ່ງອອກສິນຄ້າ, ເຄື່ອງຂອງຢ່າງໜ້ອຍສາມປີ ແລະ ມີການດຳເນີນການແຈ້ງພາສີເປັນລາຍລະອຽດຢ່າງໜ້ອຍ 250 (ຫ້າຮ້ອຍ) ຊຸດຕໍ່ປີ. ຖ້າເປັນບໍລິສັດທີ່ເປັນສາຂາ ຫຼື ເປັນຕົວແທນຂອງບໍລິສັດທີ່ເປັນການລົງທຶນຂອງຕ່າງປະເທດ ຊຶ່ງບໍລິສັດແມ່ໄດ້ຮັບການຢັ້ງຢືນເປັນຜູ້ປະກອບການເອອີໂອຢູ່ຕ່າງປະເທດແມ່ນຈະໄດ້ຮັບການພິຈາລະນາເປັນກໍລະນີສະເພາະ;

3) ຕ້ອງມີປະຫວັດການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງການແຈ້ງພາສີເປັນຢ່າງຖືກຕ້ອງ; ມີອັດຕາການປະຕິບັດຖືກຕ້ອງໃນການແຈ້ງພາສີກວມເອົາຢ່າງໜ້ອຍ 98% (ເກົ້າສິບຫ້າສ່ວນຮ້ອຍ) ຂອງການແຈ້ງພາສີທັງໝົດ;

4) ຕ້ອງບໍ່ຖືກດຳເນີນຄະດີທາງພາສີແລະ/ຫຼືບໍ່ຖືກລົງໂທດໃນການກະທຳຜິດທາງພາສີເປັນເວລາສາມປີກ່ອນການສະເໜີເຂົ້າຮ່ວມແຜນງານຜູ້ປະກອບການມາດຕະຖານເອອີໂອ;

5) ຕ້ອງນຳໃຊ້ລະບົບບັນຊີທີ່ສອດຄ່ອງກັບກົດໝາຍແລະລະບຽບການດ້ານການບັນຊີເຂົ້າໃນການບັນທຶກແລະເກັບຮັກສາຂໍ້ມູນແລະເອກະສານກ່ຽວກັບການດຳເນີນທຸລະກິດເຊັ່ນ: ການນຳເຂົ້າ, ສົ່ງອອກ, ການເກັບຮັກສາ, ການຫຸ້ມຫໍ່, ການຂົນສົ່ງແລະການແຈ້ງພາສີທີ່ຖືກຕ້ອງ, ຊັດເຈນແລະສາມາດກວດສອບໄດ້;

6) ຕ້ອງເປັນຫົວໜ່ວຍທຸລະກິດທີ່ຖືບັນຊີນອນໃນລະບົບມອບພັນທະອາກອນມູນຄ່າເພີ່ມຂອງຂະແໜງສ່ວຍສາກອນ;

7) ຕ້ອງມີສະພາບຄ່ອງທາງດ້ານການເງິນ, ສາມາດຊຳລະຄ່າພາສີແລະພັນທະອື່ນໄດ້ຢ່າງຖືກຕ້ອງ, ຄົບຖ້ວນແລະທັນເວລາ. ບໍ່ມີສະພາບໜີ້ສິນຄຸມເຄືອ, ຄ້າງຊຳລະແກ່ຍາວຊຶ່ງຈະສົ່ງຜົນກະທົບການປະຕິບັດພັນທະດ້ານພາສີແລະພັນທະອື່ນໃນຕໍ່ໜ້າ.

8) ຕ້ອງມີລະບົບປ້ອງກັນປະກັນຄວາມປອດໄພຂອງຂໍ້ມູນບໍລິສັດເພື່ອປ້ອງກັນບໍ່ໃຫ້ບຸກຄົນຫຼືພາກສ່ວນທີ່ບໍ່ກ່ຽວຂ້ອງແລະບໍ່ໄດ້ຮັບອະນຸຍາດສາມາດເຂົ້າເຖິງຂໍ້ມູນຂອງບໍລິສັດໄດ້. ຜູ້ປະກອບການຕ້ອງນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology) ເຂົ້າໃນການບັນທຶກແລະເກັບຮັກສາຂໍ້ມູນຕ່າງໆຢ່າງປອດໄພ. ຕ້ອງມີສະຖານສະເພາະສຳລັບການເກັບຮັກສາເອກະສານກ່ຽວກັບການແຈ້ງພາສີແລະອະນຸຍາດການນຳເຂົ້າແລະສົ່ງອອກສິນຄ້າ, ເຄື່ອງຂອງເພື່ອປ້ອງກັນການຕົກເຮ່ຍເສຍຫາຍແລະສາມາດເຂົ້າເຖິງໄດ້ສະເພາະຜູ້ທີ່ໄດ້ຮັບອະນຸຍາດເທົ່ານັ້ນ;

9) ຕ້ອງມີລະບົບປ້ອງກັນຄວາມປອດໄພກ່ຽວກັບສິນຄ້າແລະການຫຸ້ມຫໍ່ເພື່ອຮັບປະກັນການບັນຈຸສິນຄ້າໃສ່ພັດສະດຸຫຸ້ມຫໍ່ ແລະ ຕູ້ສິນຄ້າຖືກຕ້ອງ, ໄດ້ມາດຕະຖານແລະປອດໄພ. ຕ້ອງຕິດສະລາກການຄ້າແລະ ສະແຕັມພາສີຢ່າງຖືກຕ້ອງ, ຕ້ອງນຳໃຊ້ສາຍລ໊ອກຕູ້ສິນຄ້າແລະມີມາດຕະການກວດກາສະພາບຕູ້ສິນຄ້າທຸກດ້ານ (ຝາດ້ານໜ້າ, ດ້ານຂ້າງ, ດ້ານຫຼັງ, ດ້ານພື້ນແລະເພດານ);

10) ຕ້ອງມີລະບົບປ້ອງກັນຄວາມປອດໄພການຂົນສົ່ງສິນຄ້າໂດຍນຳໃຊ້ມາດຕະການກວດກາພາຫະນະຂົນສົ່ງຮອບດ້ານເພື່ອປ້ອງກັນການຊຸກເຊື່ອງສິ່ງຜິດກົດໝາຍໃນເວລາຂົນສົ່ງສິນຄ້າ;

11) ຕ້ອງມີລະບົບປ້ອງກັນຄວາມປອດໄພອາຄານສະຖານທີ່. ອາຄານຂອງບໍລິສັດຕ້ອງກໍ່ສ້າງດ້ວຍວັດສະດຸຄຸນນະພາບດີ, ແໜ້ນໜາ; ມີການປ້ອງກັນອາຄານສະຖານທີ່ທີ່ແໜ້ນໜາໂດຍສະເພາະແມ່ນ: ຮົ້ວ, ປະຕູໂຂງເຂົ້າ-ອອກແລະປະຕູເຂົ້າອາຄານເປັນຕົ້ນ;ຕ້ອງມີພະນັກງານຮັກສາຄວາມປອດໄພ; ມີລະບົບຕິດຕາມການເຂົ້າ-ອອກຂອງຄົນແລະພາຫະນະ; ມີລະບົບກ້ອງວົງຈອນ CCTV, ມີລະບົບແສງສະຫວ່າງທີ່ພຽງພໍ, ມີການກຳນົດເຂດຫ້າມເຂົ້າແລະມີລະບົບແຈ້ງເຕືອນກໍລະນີມີຜູ້ບຸກລຸກເຂດຫ້າມເຂົ້າ;

12) ຕ້ອງມີລະບົບປ້ອງກັນຄວາມປອດໄພຂອງພະນັກງານ. ມີການກວດກາປະຫວັດຂອງພະນັກງານທີ່ເຂົ້າໃໝ່ເພື່ອຮັບປະກັນວ່າຜູ້ກ່ຽວບໍ່ເຄີຍກະທຳຜິດຕໍ່ມາດຕະການຄວາມປອດໄພ, ກະທຳຜິດທາງພາສີຫຼືກະທຳຜິດທາງອາຍາ; ມີການອອກບັດໃຫ້ແກ່ພະນັກງານທີ່ມີຮູບແລະລະຫັດປະຈຳຕົວຊັດເຈນ; ກຳນົດຂອບເຂດແລະສະຖານທີ່ທີ່ອະນຸຍາດໃຫ້ພະນັກງານແຕ່ລະລະດັບສາມາດເຂົ້າເຖິງໄດ້; ກໍລະນີມີພະນັກງານອອກຈາກບໍລິສັດຕ້ອງລຶບລ້າງບັດພະນັກງານໂດຍທັນທີ;

13) ຕ້ອງມີລະບົບຮັບປະກັນຄວາມປອດໄພຂອງຄູ່ຮ່ວມທຸລະກິດ. ຜູ້ປະກອບການເອອີໂອຕ້ອງປະເມີນການປະຕິບັດມາດຕະການດ້ານຄວາມປອດໄພຂອງຄູ່ຮ່ວມທຸລະກິດເຊັ່ນ: ຜູ້ສະໜອງວັດຖຸດິບ, ຜູ້ສະໜອງສິນຄ້າ, ຜູ້ສະໜອງການບໍລິການແລະລູກຄ້າເປັນຕົ້ນ. ການເຮັດສັນຍາກັບຄູ່ຮ່ວມທຸລະກິດຕ້ອງ

ໄດ້ກຳນົດມາດຕະການດ້ານຄວາມປອດໄພທີ່ຊັດເຈນແລະມີກົນໄກຕິດຕາມການປະຕິບັດຢ່າງເຂັ້ມງວດ;

14) ຕ້ອງມີລະບົບແຈ້ງເຕືອນແລະແກ້ໄຂໄພສຸກເສີນ. ຕ້ອງສ້າງຄູ່ມືກ່ຽວກັບຮັບມືກໍລະນີເກີດໄພທີ່ບໍ່ຄາດຄິດເຊັ່ນ: ໄຟໄໝ້, ນ້ຳຖ້ວມແລະການກໍ່ການຮ້າຍເປັນຕົ້ນ. ຕ້ອງມີການຝຶກຊ້ອມຍົກຍ້າຍຄົນອອກຈາກອາຄານກໍລະນີເກີດເຫດສຸກເສີນ. ຕ້ອງຕິດຕັ້ງອຸປະກອນແຈ້ງເຕືອນແລະເຄື່ອງມືປ້ອງກັນໄພຂັ້ນພື້ນຖານ.

## 6.ຄວາມຮັບຜິດຊອບຂອງຜູ້ປະກອບການມາດຕະຖານເອອີໂອ

ບໍລິສັດທີ່ຈະເຂົ້າຮ່ວມແຜນງານເອອີໂອຕ້ອງມີຄວາມຮັບຜິດຊອບດັ່ງນີ້:

1) ຕ້ອງຮັບປະກັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ, ກົດໝາຍ, ລະບຽບການ, ນະໂຍບາຍ ແລະນິຕິກຳລຸ່ມກົດໝາຍອື່ນໆ ທີ່ກ່ຽວຂ້ອງກັບການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງຢ່າງເຂັ້ມງວດ;
2) ຕ້ອງແຕ່ງຕັ້ງບຸກຄົນຫຼືໜ່ວຍງານຮັບຜິດຊອບຕິດຕໍ່ພົວພັນ ແລະ ປະສານງານກັບລັດຖະການພາສີໂດຍສະເພາະແມ່ນການໜອງຂໍ້ມູນກ່ຽວກັບບໍລິສັດ, ສິນຄ້າ, ການນຳເຂົ້າ-ສົ່ງອອກສິນຄ້າ ແລະ ອື່ນໆ;
3) ຕ້ອງຈັດຝຶກອົບຮົມໃຫ້ແກ່ພະນັກງານພາຍໃນບໍລິສັດກ່ຽວກັບຂະບວນການຈັດສົ່ງສິນຄ້າ, ຄວາມສ່ຽງໃນການເຄື່ອນຍ້າຍສິນຄ້າ, ການດຳເນີນທຸລະກຳກັບຄູ່ຮ່ວມການຄ້າ, ການແຈ້ງພາສີແລະອື່ນໆ;
4) ຕ້ອງໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ພາສີໃນການລົງກວດກາສະຖານທີ່ຂອງບໍລິສັດເຊັ່ນ: ຫ້ອງການ, ສາງ, ລະບົບປ້ອງກັນໄພແລະອື່ນໆ;
5) ຕ້ອງໃຫ້ການຮ່ວມມືແກ່ເຈົ້າໜ້າທີ່ພາສີໃນການສະໜອງຂໍ້ມູນແລະເອກະສານເພື່ອການກວດສອບການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ.

## 7.ສິດຂອງຜູ້ປະກອບການມາດຕະຖານເອອີໂອ

ບໍລິສັດຜູ້ປະກອບການມາດຕະຖານເອອີໂອ ມີສິດສະເໜີໃຫ້ລັດຖະການພາສີອຳນວຍຄວາມສະດວກໃນການກວດປ່ອຍສິນຄ້າຂອງຕົນ ເປັນກໍລະນີພິເສດ ດັ່ງນີ້:

1) ມີສິດສະເໜີໃຫ້ລັດຖະການພາສີດຳເນີນການກວດກາ ແລະ ຮັບຮອງເອກະສານແຈ້ງພາສີ ກ່ອນລ່ວງໜ້າສິນຄ້າມາຮອດດ່ານ 7 ວັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍວ່າດ້ວຍພາສີ;
2) ມີສິດສະເໜີໃຫ້ລັດຖະການພາສີ ເພື່ອດຳເນີນການກວດກາສິນຄ້າຕົວຈິງຢູ່ສາງຂອງຕົນເອງ ເພື່ອຫຼຸດຜ່ອນການຄວບຄຸມກວດກາຢູ່ດ່ານພາສີຊາຍແດນ.
3) ມີສິດສະເໜີໃຫ້ລັດຖະການພາສີ ພິຈາລະນາໃຫ້ບໍລິການນອກໂມງລັດຖະການ ໃນກໍລະນີມີຄວາມຈຳເປັນຮີບດ່ວນ.
4) ມີສິດສະເໜີໃຫ້ລັດຖະການພາສີປັບປຸງຂັ້ນຕອນ, ກົນໄກ ແລະ ວິທີການ ເພື່ອທະວີການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍສອດຄ່ອງກັບກົດໝາຍ, ລະບຽບການພາຍໃນ ແລະ ລະບຽບການສາກົນ.

## 8.ຄວາມຮັບຜິດຊອບຂອງລັດຖະການພາສີ

ລັດຖະການພາສີຕ້ອງປະຕິບັດມາດຕະການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການມາດຕະຖານເອອີໂອເປັນອັນສະເພາະ ຄື:

1) ຕ້ອງໃຫ້ບູລິມະສິດໃນການກວດປ່ອຍສິນຄ້າຂອງຜູ້ປະກອບການມາດຕະຖານເອອີໂອເຊັ່ນ: ການຈັດປ່ອງຮັບເອກະສານສະເພາະແລະການກວດກາດ້ານຂໍ້ມູນແລະເອກະສານຂອງຜູ້ປະກອບການເອອີໂອກ່ອນການກວດກາເອກະສານແຈ້ງພາສີທົ່ວໄປ;

2) ຕ້ອງຕັ້ງຄ່າຄວາມສ່ຽງການແຈ້ງພາສີຂອງຜູ້ປະກອບການມາດຕະຖານເອອີໂອໃຫ້ເປັນຄ່າຄວາມສ່ຽງຕໍ່າ ເພື່ອດຳເນີນການກວດກາສິນຄ້າຕົວຈິງໜ້ອຍທີ່ສຸດ. ໃນກໍລະນີມີຄວາມຈຳເປັນຕ້ອງກວດກາສິນຄ້າຕົວຈິງເນື່ອງຈາກລະບົບບໍລິຫານຄວາມສ່ຽງແຈ້ງບອກເປັນການແຈ້ງທີ່ມີຄວາມສ່ຽງສູງຕ້ອງໃຫ້ບຸລິມະສິດກວດກາສິນຄ້າຂອງຜູ້ປະກອບການມາດຕະຖານເອອີໂອກ່ອນການກວດກາສິນຄ້າຂອງຜູ້ປະກອບການທົ່ວໄປແລະອະນຸຍາດໃຫ້ດຳເນີນການກວດກາສິນຄ້າຕົວຈິງຢູ່ສາງຂອງຜູ້ປະກອບການມາດຕະຖານເອອີໂອ;
3) ກໍລະນີຜູ້ປະກອບການມາດຕະຖານເອອີໂອດຳເນີນການແຈ້ງພາສີລ່ວງໜ້າກ່ອນສິນຄ້າມາຮອດດ່ານ, ເຈົ້າໜ້າທີ່ພາສີຕ້ອງດຳເນີນການກວດກາເອກະສານ, ຮັບຮອງການແຈ້ງແລະຮັບຊຳລະຄ່າພາສີແລະພັນທະອື່ນກ່ອນສິນຄ້າມາຮອດດ່ານ. ເມື່ອສິນຄ້າມາຮອດດ່ານແມ່ນໃຫ້ດຳເນີນການກວດປ່ອຍສິນຄ້າໂດຍທັນທີ;
4) ກໍລະນີຜູ້ປະກອບການມາດຕະຖານເອອີໂອສະເໜີໃຫ້ເປີດບໍລິການກວດປ່ອຍສິນຄ້ານອກໂມງລັດຖະການ. ລັດຖະການພາສີຕ້ອງພິຈາລະນາຕາມການສະເໜີໂດຍອີງໃສ່ຄວາມພ້ອມທາງດ້ານເຄື່ອງມືແລະບຸກຄະລະກອນເພື່ອຮັບປະກັນປະສິດທິພາບຂອງການປະຕິບັດວຽກງານ;
5) ຕ້ອງສ້າງຕັ້ງໜ່ວຍງານເອອີໂອຢູ່ກົມພາສີເພື່ອປະຕິບັດໜ້າທີ່ຕິດຕາມ, ກວດກາແລະແກ້ໄຂບັນຫາກ່ຽວການດຳເນີນຂັ້ນຕອນການແຈ້ງພາສີໃຫ້ແກ່ຜູ້ປະກອບການມາດຕະຖານເອອີໂອ. ໜ່ວຍງານດັ່ງກ່າວຕ້ອງຢູ່ພາຍໃຕ້ການນຳພາ-ຊີ້ນຳໂດຍກົງຂອງຫົວໜ້າກົມພາສີ.

## 9.ຂັ້ນຕອນການສະເໜີຂໍການຢັ້ງຢືນເປັນຜູ້ປະກອບການມາດຕະຖານເອອີໂອ

ຜູ້ປະກອບການທີ່ມີຈຸດປະສົງເຂົ້າຮ່ວມແຜນງານເອອີໂອ ຕ້ອງປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1) ຕ້ອງປະເມີນຜົນຕົນເອງຕາມແບບຟອມທີ່ກົມພາສີກຳນົດ (ແບບຟອມດັ່ງກ່າວສາມາດດາວໂຫຼດຈາກເວັບໄຊ້ຂອງກົມພາສີ). ຜູ້ປະກອບການສາມາດຂໍຄຳອະທິບາຍຈາກກົມພາສີກ່ຽວກັບການຕື່ມຂໍ້ມູນໃສ່ແບບຟອມແລະຂໍ້ກຳນົດຕ່າງໆກ່ຽວກັບການເຂົ້າຮ່ວມແຜນງານຜູ້ປະກອບການມາດຕະຖານເອອີໂອ;
2) ຍື່ນໜັງສືສະເໜີເຖິງຫົວໜ້າກົມພາສີ ເພື່ອແຈ້ງເຈດຈຳນົງຂອງບໍລິສັດທີ່ມີຄວາມຕ້ອງການເປັນຜູ້ປະກອບການມາດຕະຖານເອອີໂອດ້ວຍຄວາມສະໝັກໃຈ.ພ້ອມທັງຄັດຕິດປຶ້ມປະເມີນຜົນດ້ວຍຕົນເອງແລະເອກະສານທີ່ກ່ຽວຂ້ອງ;

## 10.ຂັ້ນຕອນການກວດກາເງື່ອນໄຂແລະມາດຖານຂອງຜູ້ປະກອບການເອອີໂອ

1) ພາຍຫຼັງໄດ້ຮັບໜັງສືສະເໜີຈາກຜູ້ປະກອບການ, ກົມພາສີຕ້ອງດຳເນີນການກວດກາຂໍ້ມູນ ແລະ ເອກະສານທັງໝົດໃຫ້ສຳເລັດ ແລະ ແຈ້ງຜົນການກວດກາໃຫ້ຜູ້ປະກອບການຮັບຊາບຢ່າງເປັນລາຍລັກອັກສອນພາຍໃນ 5 ວັນລັດຖະການຄື:
   - ຖ້າຜູ້ປະກອບການໃດມີເງື່ອນໄຂ ແລະ ມາດຖານຖືກຕ້ອງຕາມລະບຽບການສະບັບນີ້, ກົມພາສີຕ້ອງແຈ້ງການເຖິງຜູ້ປະກອບການເພື່ອລົງກວດກາສະຖານທີ່ຕົວຈິງ ພາຍໃນ 5 ວັນຫຼັງຈາກອອກແຈ້ງການ.
   - ສຳລັບຜູ້ປະກອບການທີ່ບໍ່ຜ່ານເງື່ອນໄຂ ແລະ ມາດຖານທີ່ກຳນົດໃນລະບຽບການສະບັບນີ້, ກົມພາສີ ຕ້ອງແຈ້ງການໃຫ້ຜູ້ກ່ຽວກັບຮັບຊາບ ພ້ອມທັງໃຫ້ຄຳແນະນຳໃນການປັບປຸງໃຫ້ຖືກຕ້ອງຕາມເງື່ອນໄຂ ແລະ ມາດຖານ.

2) ພາຍຫຼັງສຳເລັດການລົງກວດກາສະຖານທີ່ຕົວຈິງ, ກົມພາສີ ຕ້ອງດຳເນີນການ ດັ່ງນີ້:
   - ກໍລະນີ ຜົນການກວດກາສະຖານທີ່ຕົວຈິງ ຫາກເຫັນວ່າຜູ້ປະກອບການມີເງື່ອນໄຂ ແລະ ມາດຖານຄົບຖ້ວນ, ຖືກຕ້ອງ ກົມພາສີ ຕ້ອງອອກໜັງສືຢັ້ງຢືນໃຫ້ເປັນຜູ້ປະກອບການມາດຕະຖານເອອີໂອ ພາຍໃນ 5 ວັນລັດຖະການ ຫຼັງຈາກສຳເລັດການກວດກາສະຖານທີ່ຂອງຜູ້ປະກອບການ.
   - ກໍລະນີ ຜົນການກວດກາສະຖານທີ່ຕົວຈິງ ຫາກພົບເຫັນສິ່ງບໍ່ຖືກຕ້ອງ, ກົມພາສີ ຕ້ອງອອກແຈ້ງການເຖິງບໍລິສັດດັ່ງກ່າວຮັບຊາບ ພ້ອມທັງໃຫ້ຄຳແນະນຳໃນການປັບປຸງ.
3) ຜູ້ປະກອບການທີ່ໄດ້ຮັບແຈ້ງການຈາກກົມພາສີ ວ່າມີເງື່ອນໄຂ ແລະ ມາດຖານຖືກຕ້ອງຕາມລະບຽບການ ຕ້ອງເຂົ້າມາເຊັນສັນຍາກັບກົມພາສີ ພາຍໃນ 5 ວັນຫຼັງຈາກໄດ້ຮັບແຈ້ງພາສີ.

**11.ການອະນຸມັດ**

ມອບໃຫ້ຫົວໜ້າກົມພາສີເປັນຜູ້ອະນຸມັດໃບຢັ້ງຢືນຜູ້ປະກອບການມາດຕະຖານເອອີໂອຊຶ່ງມີອາຍຸການນຳໃຊ້ສາມປີ. ກົມພາສີຕ້ອງດຳເນີນການປະເມີນຜົນການເຄື່ອນໄຫວຂອງຜູ້ປະກອບການມາດຕະຖານເອອີໂອ. ຖ້າເຫັນວ່າຜູ້ກ່ຽວເຄື່ອນໄຫວຖືກຕ້ອງຕາມກົດໝາຍແລະລະບຽບການຈຶ່ງພິຈາລະນາຕໍ່ອາຍຸໃບຢັ້ງຢືນດັ່ງກ່າວ.

**12.ການເຊັນສັນຍາເອອີໂອ**

ຜູ້ປະກອບການມາດຕະຖານເອອີໂອ ຕ້ອງເຊັນສັນຍາຄ້ຳປະກັນຢ່າງເປັນລາຍລັກອັກສອນກັບກົມພາສີ ເພື່ອຮັບປະກັນການເຄື່ອນໄຫວໃຫ້ຖືກຕ້ອງຕາມລະບຽບການ. ແບບຟອມຮ່າງສັນຍາເອອີໂອໄດ້ລະບຸໃນເອກະສານຊ້ອນທ້າຍ 1.

**13.ກາໝາຍເອອີໂອ**

ກົມພາສີ ເປັນຜູ້ອອກແບບ ແລະ ນຳໃຊ້ກາໝາຍເອອີໂອ (AEO Logo). ກາໝາຍເອອີໂອ ຕ້ອງສະແດງໃຫ້ເຫັນລັກສະນະຊາດ, ຄວາມທັນສະໄໝ, ຄວາມເປັນມາດຕະຖານ ແລະ ການເຊື່ອມໂຍງສາກົນ. ຜູ້ປະກອບການມາດຕະຖານເອອີໂອ ສາມາດນຳໃຊ້ກາໝາຍດັ່ງກ່າວໃນໂຄສະນາທຸລະກິດຂອງຕົນ ເຊັ່ນ: ພິມໃສ່ຫົວເອກະສານ, ນາມບັດ, ສະຕິເກີ້, ໂບຣຊົວ ແລະ ອື່ນໆ.

**14.ການກວດສອບຄືນການແຈ້ງພາສີ**

ກົມພາສີ ຕ້ອງສ້າງແຜນ ແລະ ດຳເນີນການກວດສອບຄືນການແຈ້ງພາສີ ຕໍ່ບັນດາຜູ້ປະກອບການມາດຕະຖານເອອີໂອ ຫຼາຍກວ່າຜູ້ປະກອບການທົ່ວໄປ ເພື່ອຮັບປະກັນການເຄື່ອນໄຫວທີ່ຖືກຕ້ອງຂອງຜູ້ປະກອບການມາດຕະຖານເອອີໂອ ໂດຍໃຫ້ປະຕິບັດຕາມ ໝວດທີ 1, ພາກທີ X ຂອງກົດໝາຍວ່າດ້ວຍພາສີ ແລະ ບັນດານິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**15.ການຮັກສາຂໍ້ມູນຄວາມລັບ**

ທຸກຂໍ້ມູນການພົວພັນລະຫວ່າງລັດຖະການພາສີ ແລະ ຜູ້ປະກອບການມາດຕະຖານເອອີໂອ ຕ້ອງຖືກເກັບຮັກສາເປັນຄວາມລັບ. ຖ້າຜູ້ປະກອບການມາດຕະຖານເອອີໂອຕ້ອງການເຜີຍແຜ່ຂໍ້ມູນກ່ຽວກັບມາດຕະການຄວບຄຸມ ແລະ ການອະນຸມັດຂອງ ລັດຖະການພາສີ ຕ້ອງໄດ້ຈາກກົມພາສີເສຍກ່ອນ.

**16.ມາດຕະການຕໍ່ຜູ້ລະເມີດ**

ກົມພາສີ ຕ້ອງຕິດຕາມ ແລະ ປະເມີນຜົນການເຄື່ອນໄຫວຂອງຜູ້ປະກອບການມາດຕະຖານເອອີໂອ ເປັນແຕ່ລະໄລຍະຢ່າງໃກ້ສິດ. ກໍລະນີ ພົບເຫັນການກະທຳຜິດທີ່ເປັນການລະເມີດສັນຍາ ແລະ ລະບຽບການ, ມອບໃຫ້ກົມ

ພາສີ ປະຕິບັດມາດຕະການຕາມຂັ້ນຕອນ ຄື: ສຶກສາອົບຮົມ, ຕັກເຕືອນ, ສັ່ງໂຈະຊົ່ວຄາວ, ສັ່ງຍົກເລີກຖາວອນ ແລະ ມາດຕະການອື່ນໆ ຕາມກົດໝາຍ.

**16. ການຈັດຕັ້ງປະຕິບັດ**

- ມອບໃຫ້ກົມພາສີສ້າງຄຳແນະນຳເພີ່ມເຕີມເພື່ອຈັດຕັ້ງຜັນຂະຫຍາຍຄຳແນະນຳສະບັບນີ້ ພ້ອມທັງດຳເນີນການເຜີຍແຜ່ໃຫ້ພະນັກງານ, ຜູ້ປະກອບການ ແລະ ສັງຄົມ ຮັບຊາບຢ່າງກ້ວາງຂວາງ ເພື່ອຮັບປະກັນປະສິດທິຜົນຂອງການຈັດຕັ້ງປະຕິບັດ.
- ໃຫ້ເລີ່ມປະຕິບັດແຜນງານຜູ້ປະກອບການມາດຕະຖານເອອີໂອ ໂດຍຄັດເລືອກເອົາຜູ້ປະກອບການທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ, ເຄື່ອງຂອງ ເປັນບາດກ້າວເລີ່ມຕົ້ນ. ພາຍຫຼັງຈັດຕັ້ງປະຕິບັດໄດ້ໜຶ່ງປີ ໃຫ້ມີການປະເມີນຜົນຄືນ ຖ້າເຫັນວ່າມີປະສິດຜົນ ແມ່ນໃຫ້ຜັນຂະຫຍາຍໄປສູ່ທຸລະກິດປະເພດອື່ນໆຕາມ ເງື່ອນໄຂຕົວຈິງ.
- ຄຳແນະນຳສະບັບນີ້ມີຜົນສັກສິດຫຼັງລົງລາຍເຊັນແລະພາຍຫຼັງທີ່ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ